**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ເລກທີ 1339 /ຫອຄ
ນະຄອນຫຼວງວຽງຈັນ, ວັນທີ 30 ມິຖຸນາ 2025

# ແຈ້ງການ

**ເຖິງ:** ບັນດາພາກສ່ວນຕ່າງໆ (ພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ.
**ເລື່ອງ:** ການຮັບເອກະສານຂາເຂົ້າຂອງກະຊວງອຸດສາຫະກຳ ແລະ ການຄ້າ.

- ອີງຕາມ ແຈ້ງການຂອງກອງເລຂາຄະນະຮັບຜິດຊອບປັບປຸງກົງຈັກການຈັດຕັ້ງ, ຄະນະຈັດຕັ້ງສູນກາງ ສະບັບເລກ 218 /ຄຈສພ, ລົງວັນທີ 13 ມິຖຸນາ 2025.

ຫ້ອງການ ກະຊວງ ອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງບັນດາພາກສ່ວນຕ່າງໆ (ພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດຊາບວ່າ: ພາຍຫຼັງທີ່ໄດ້ມີການປັບປຸງກົງຈັກການຈັດຕັ້ງໂດຍການໂຮມກະຊວງ ພະລັງງານ ແລະ ບໍ່ແຮ່ ເຂົ້າກັບ ກະຊວງອຸດສາຫະກຳ ແລະ ການຄ້າ, ຈຶ່ງຂໍແຈ້ງມາຍັງທ່ານກ່ຽວກັບການຮັບເອກະສານຂາເຂົ້າຂອງກະຊວງອຸດສາຫະກຳແລະການຄ້າ ດັ່ງນີ້:

1. ປິດຮັບເອກະສານຂາເຂົ້າ ຢູ່ຕຶກກະຊວງພະລັງງານ ແລະ ບໍ່ແຮ່ (ເກົ່າ) ຕັ້ງຢູ່ບ້ານຝາຍ, ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ນັບແຕ່ວັນທີ **18 ມິຖຸນາ 2025**;
2. ເປີດຮັບເອກະສານຂາເຂົ້າ ຢູ່ຕຶກກະຊວງ ອຸດສາຫະກຳ ແລະ ການຄ້າ, ຕັ້ງຢູ່ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດດ້ວຍ.

**ຫົວໜ້າຫ້ອງການ**

ຫ້ອງການ

**ປອ. ບົວວັນ ວິລະວົງ**